# ບົດທີ 5

# ຄຳອຸປະມາເລື່ອງອານາຈັກ

ມທ 21:28-32

ເລື່ອງ ____________





ມທ 21:33-46

ເລື່ອງ ____________



ມທ 22:1-14

ເລື່ອງ ____________



# ຄຳອຸປະມາເລື່ອງລູກຊາຍສອງຄົນ

**1** ໃນບົດກ່ອນທ່ານໄດ້ຮຽນໜ້ອຍດຽວເລື່ອງຄຳອຸປະມານີ້. ໃຫ້ທ່ານອ່ານອີກຈາກມັດທາຍ 21:28-32 ຄຳອຸປະ ມານີ້ສອນຫຼັກສຳຄັນຢ່າງໃດ? (ເລືອກ)

ກ. ຢ່າຟ້າວສັນຍາປະການໃດເພື່ອຢ້ານວ່າຈະເຮັດຕາມຄຳສັນຍາບໍ່ໄດ້.

ຂ. ການເປັນຍິງແມ່ຈ້າງບໍ່ເປັນຫຍັງເພາະພະເຢຊູບອກວ່າເຂົາຈະເຂົ້າໃນລາຊະແຜ່ນດິນຂອງພະເຈົ້າ.

ຄ. ການເຊື່ອຟັງມີຄຸນຄ່າຫຼາຍກວ່າຄຳສັນຍາ.

**2** ຄຳອຸປະມາທັງ 3 ປະການທີ່ເຮົາຈະຮຽນໃນບົດນີ້ ເວົ້າເລື່ອງແຜ່ນດິນຂອງພະເຈົ້າທັງໝົດ.

ກ. ເລື່ອງລູກຊາຍສອງຄົນສອນວ່າຄົນເກັບພາສີ ແລະຍິງແມ່ຈ້າງທີ່ເຊື່ອໄວ້ວາງໃຈໃນພະອົງຈະເຂົ້າໃນ ____________________________________ ກ່ອນພວກນັກທຳທີ່ບໍ່ເຊື່ອ.

ຂ. ເລື່ອງສວນອະງຸ່ນແລະຄົນເຊົ່າສອນເລື່ອງ ______________________ ໃນ ມທ 21:43

ຄ. ເລື່ອງພິທີອະພິເສກເປັນຕົວຢ່າງເລື່ອງ _________________________ ໃນ ມທ 22:2

**3** ຄຳອຸປະມາທັງສາມນັ້ນສອນເລື່ອງດຽວຄືເລື່ອງໃດ? (ເລືອກ)

ກ. ບັນຫາທີ່ເກີດຂຶ້ນລະຫວ່າງນາຍຈ້າງກັບລູກຈ້າງ.

ຂ. ໝາຍສຳຄັນໃນຍຸກສຸດທ້າຍ.

ຄ. ລາຊະແຜ່ນດິນຂອງພະເຈົ້າ

**4** ກ. ໃນບົດກ່ອນເຮົາຮຽນຄຳອຸປະມາໃດ? ____________________________________

ຂ. ເຮົາຍັງບໍ່ໄດ້ຮຽນເລື່ອງຄຳອຸປະມາສອງປະການໃດ?

_____________________________ ແລະ ______________________________

**5** ກ. ຄຳອຸປະມາໃນມັດທາຍບົດທີ 21 ແລະ 22 ວ່າດ້ວຍຫຍັງເປັນຕົ້ນ? _______________

ຂ. ຫຼັກຄຳສອນໃນຄຳອຸປະມາເລື່ອງລູກຊາຍສອງຄົນຄືຫຍັງ? _____________________

_______________________________________________________________

**6** ກ. ຄຳອຸປະມາໃດຢູ່ໃນມັດທາຍ 21:28-32? ________________________________

ຂ. ຄຳອຸປະມາໃດໃນມັດທາຍ 21:33-46? __________________________________

ຄ. ຄຳອຸປະມາໃດໃນມັດທາຍ 22:1-14? ___________________________________

ຝຶກ: ໃຫ້ທ່ານເປີດຕາຕະລາງໃນບົດ 4 (ໜ້າ 51)

1. ຂຽນຕົ້ນເຫດຄຳອຸປະມາທັງສາມນັ້ນໃຫ້ຖືກກັບຫ້ອງ ບົດແລະຂໍ້ດ້ວຍ.
2. ຂຽນທີ່ວ່າດ້ວຍໃນບ່ອນຫວ່າງໃຫຍ່ (ເລື່ອງດຽວກັນທັງສາມ)
3. ໃຫ້ຂຽນຫຼັກຄຳສອນສະເພາະຄຳອຸປະມາເລື່ອງລູກຊາຍສອງຄົນ.
   ຄຳຖາມ 5 ຂໍ້ ຂ.

# ຄຳອຸປະມາເລື່ອງສວນອະງຸ່ນແລະຄົນເຊົ່າ

**7** ໃຫ້ອ່ານ ມັດທາຍ 21:33-46 ໃນບົດກ່ອນເຮົາຮຽນມາແລ້ວວ່າ ສວນອະງຸ່ນປຽບກັບຊາດໃດ?

______________________________________________

**8** ໃນແຕ່ລະຂໍ້ຕໍ່ໄປນີ້ ໃຫ້ທ່ານໝາຍ ໄວ້ໃສ່ 4 ຈຳພວກຄົນທີ່ປາກົດມາໃນຄຳອຸປະມານີ້:

ກ. ຄົນເມົາເຫຼົ້າ ຂ. ຄົນເຊົ່າສວນ

ຄ. ເຈົ້າຂອງເຮືອ ງ. ເຈົ້າຂອງສວນ

ຈ. ຂ້ອຍໃຊ້ຂອງເຈົ້າຂອງສວນ ສ. ແມ່ຂອງເຈົ້າຂອງສວນ

ຊ. ນ້ອງຂອງເຈົ້າຂອງສວນ ຍ. ລູກຊາຍຂອງເຈົ້າຂອງສວນ

**9** ຖ້າສວນອະງຸ່ນປຽບທຽບກັບຊາດຢິວ ເຈົ້າຂອງສວນປຽບທຽບໃຜ? (ເລືອກ)

ກ. ພະເຈົ້າ ຂ. ປະໂລຫິດ ຄ. ໂມເຊ

**10** ໃນລູກາ 11:49-50 ພວກຂ້ອຍໃຊ້ປຽບກັບໃຜ? (ເລືອກ)

ກ. ເທວະດາ ຂ. ຜູ້ປະກາດພະທຳ ຄ. ນັກທຳ

**11** ຖ້າເຈົ້າຂອງສວນອະງຸ່ນຄືພະເຈົ້າ ລູກຊາຍທີ່ເຂົາຂ້າປຽບຄືໃຜ? ____________________

**12** ໃຫ້ອ່ານ ມັດທາຍ 21:45-46

ກ. ພະເຍຊູເວົ້າເລື່ອງໃຜໃນຄຳອຸປະມານີ້? _______________ ແລະ _______________

ຂ. ເຂົາສັງເກດຮູ້ບໍ່? ______________________________

ຄ. ເຂົາກະທຳຕອບຢ່າງໃດ? ______________________________

ງ. ແມ່ນພວກໃດທີ່ປຽບທຽບພວກປະໂລຫິດແລະພວກຟາລິຊາຍ? (ເລືອກ)

_______ ຂ້ອຍໃຊ້ຂອງເຈົ້າຂອງສວນ

_______ ຄົນເຊົ່າສວນທີ່ຂ້າຂ້ອຍໃຊ້ກັບລູກຊາຍ

_______ ເຈົ້າຂອງສວນ

**13** ລາຍຊື່ຂ້າງຊ້າຍມີ 4 ຈຳພວກທີ່ເຫັນໃນຄຳອຸປະມາ. ໃຫ້ທ່ານຈັບຄູ່ກັບແຕ່ລະຈຳພວກຂ້າງຂວາ.



ກ. ເຈົ້າຂອງສວນ 1. _____ ຟາລິຊາຍກັບປະໂລຫິດ

ຂ. ຄົນເຊົ່າສວນ 2. _____ ຜູ້ປະກາດພະທຳ

ຄ. ພວກຂ້ອຍໃຊ້ 3. _____ ພະເຈົ້າ

ງ. ລູກຊາຍ 4. _____ ພະເຍຊູຄຣິດ.



**14** ໃນບົດກ່ອນທີ່ເຮົາຮຽນເລື່ອງຕົ້ນເດື່ອເທດ.

ກ. ພະເຍຊູຊອກຫາຫຍັງຈາກຕົ້ນເດື່ອເທດ? ______________________________

ຂ. ໃນຄຳອຸປະມາເລື່ອງສວນອະງຸ່ນ ເຈົ້າຂອງສວນຊອກຫາຜົນຜະລິດຈາກໃຜ? _________

**15** ກ. ສຸດທ້າຍຕົ້ນເດື່ອເທດກາຍເປັນຢ່າງໃດ? ________________________________

ຂ. ໃນມັດທາຍ 21:40-41 ເຈົ້າຂອງສວນຈະເຮັດຢ່າງໃດກັບຄົນເຊົ່າທີ່ເຮັດການຊົ່ວນັ້ນ?

________________________________________________________________

ຄ. ຕົ້ນເດື່ອເທດອັນບໍ່ມີໝາກປຽບເຖິງຊາດໃດ? ____________________________

ງ. ຜູ້ທີ່ເຊົ່າສວນ ປຽບເຖິງໃຜ? ________________________________________

ຈ. ຄິດເບິ່ງກ່ອນ! ເລື່ອງຕົ້ນເດື່ອເທດແລະຄຳອຸປະມາກ່ຽວກັບຄົນເຊົ່າສວນອະງຸ່ນມີເນື້ອຄວາມຄ້າຍຄືກັນບໍ່? ______________________________________________

**16** ໃນ ມັດທາຍ 21:43 ພະເຈົ້າຈະຍົກເອົາຫຍັງຈາກພວກຟາລີຊາຍແລະປະໂລຫິດໃຫຍ່?

________________________________________________________________

| ໃຫ້ທ່ານຂີດເສັ້ນແດງກ້ອງຄຳ “ລາຊະແຜ່ນດິນ” ໃນ ມັດທາຍ 21:43. |
|---|

**17** ໃຫ້ເຮົາຮັບພິຈາລະນາເລື່ອງຫຼັກຄຳສອນໃນຄຳອຸປະມານີ້ກ່ອນ. ໃນແຕ່ລະຂໍ້ຕໍ່ໄປນີ້ ອັນໃດຖືກທີ່ສຸດກັບເນື້ອ ຄວາມໃນຄຳອຸປະມາເລື່ອງຄົນເຊົ່າສວນອະງຸ່ນ? (ເລືອກ)

ກ. ເຈົ້າຂອງສວນອະງຸ່ນລົງທຶນຢ່າງບໍ່ມີປະໂຫຍດ.

ຂ. ການປ່ຽນທ່າທີໃນທາງດີ ມີຄຸນຄ່າຫຼາຍກວ່າຄຳສັນຍາລ້າ ໆ.

ຄ. ເຈົ້າຂອງສວນເປັນຕົວຢ່າງທີ່ດີໃນຄວາມອົດທົນ.

ງ. ເຈົ້າຂອງສວນຕັດສິນໃຈບໍ່ຖືກທີ່ເພິ່ນໃຫ້ລູກຊາຍໄປ.

| ໃຫ້ທ່ານເປີດເບິ່ງຕາຕະລາງໃນບົດ 4 (ໜ້າ 51). ຈົດຄຳຕອບ 17 ຂ.<br>ລຸ່ມ “ຫຼັກຄຳສອນ” ຂ້າງ “ອຸປະມາເລື່ອງລູກຊາຍສອງຄົນ” |
|---|

**18** ໃນມັດທາຍ 21:42 ພະເຢຊູກ່າວອ້າງຈາກບົດແລະຂໍ້ໃດໃນພະຄຳພີເດີມ? ___________

**19** ກ. ຂໍ້ພະຄຳພີເດີມນັ້ນ ເວົ້າເຖິງສິ່ງໃດ? ________________________________

ຂ. ແມ່ນໃຜຖອກຫີນນັ້ນຖິ້ມເສຍ? ______________________________________

ຄ. ຫີນນັ້ນກາຍເປັນຫຍັງ? ____________________________________________

**20** ໃນກິດຈະການ 4:11 ເປໂຕອ້າງເຖິງຫີນນັ້ນອີກ. ແມ່ນຜູ້ໃດທີ່ເປັນຫີນທີ່ຖືກປະຖິ້ມ? _____

**21** ກ. ແມ່ນພວກໃດປະຖິ້ມຫີນນັ້ນ ________________________________________

ຂ. ແມ່ນພວກໃດປະຖິ້ມພະເຢຊູ? ______________________________________

**22** ໃນການກໍ່ສ້າງຕຶກນັ້ນແມ່ນຫີນເສົາໃດທີ່ສຳຄັນກວ່າໝູ່? __________________________

**23** ກ. ໃນມັດທາຍ 21:42 ພະເຢຊູກ່າວອ້າງຈາກບົດແລະຂໍ້ໃດໃນພະຄຳພີເດີມ? _________ (ຂໍ້ນັ້ນບໍ່ໄດ້ລວມໃນພະຄຳພີສະບັບ 1979)

ຂ. ກິດຈະການບົດແລະຂໍ້ໃດຍົກ ພສສ 118:22 ມາກ່າວອ້າງອີກ? ________________

ຄ. ແມ່ນໃຜຍົກມາກ່າວອ້າງ (ກຈກ 4:8)? ____________________

**24** ກ. ຫີນໃນ ມັດທາຍ 21:42 ປຽບເຖິງໃຜ? ____________________
ຂ. ຫີນນັ້ນກາຍເປັນຫຍັງ? ____________________

**25** ພວກຟາລິຊາຍແລະປະໂລຫິດຮູ້ວ່າພະອີງຊົງກ່າວເຖິງເຂົາແລ້ວ.
ກ. ໃນ ມທ 21:44 ຜູ້ທີ່ລົ້ມທັບຫີນນັ້ນຈະກາຍເປັນຢ່າງໃດ? ____________
ຂ. ແຕ່ຄົນທີ່ຫີນຕົກທັບຈະເປັນຢ່າງໃດ? ____________________

*ສະແດງວ່າຜູ້ທີ່ປະຖິ້ມຫີນນັ້ນຄ້າຍຄືກັນກັບຄົນເຊົ່າສວນອະງຸ່ນທີ່ບໍ່ຍອມສົ່ງຜົນໃຫ້ເຈົ້າຂອງສວນທັງສອງຝ່າຍຈະ ຖືກຂ້າເສຍ*

**26** ກ. ໃຫ້ທ່ານເປີດເບິ່ງ 1 ເປໂຕ ບົດທີ 2 ແມ່ນຂໍ້ໃດທີ່ຍົກກ່າວອ້າງຈາກ ພສສ 118:22? ____
ຂ. 1 ເປໂຕ 2:8 ເວົ້າເຖິງຫີນທີ່ເຮັດໃຫ້ ____________ . (ຕື່ມຄວາມຂາດ)

**27** ໃນຫົວກສູດມັດທາຍເຫຼັ້ມ 4 ບົດທີ 14 ເຮົາຮຽນມາເລື່ອງການເຮັດໃຫ້ຜູ້ອື່ນຫຼົງຜິດ ແລະ ຊູນສະດຸດ. ໃນ 1 ເປໂຕ 2:8 ຄົນສະດຸດນັ້ນເປັນຄົນທີ່ຮັບຮູ້ວ່າພະເຢຊູເປັນພະເຈົ້າ ຫຼື ເປັນຜູ້ບໍ່ຍອມຮັບຮູ້? ____________________

**28** ກ. ແມ່ນສາວົກຄົນໃດທີ່ອ້າງເຖິງພະເຢຊູວ່າເປັນເສົາເອກ? ____________
ຂ. ເຫັນບັນທຶກໄວ້ໃນພະຄຳພີໃໝ່ສອງບ່ອນຄືພະທຳ ________ ບົດ ______
ແລະອີກ ໃນພະທຳ ________ ບົດ ________ . (ຕື່ມຄວາມທີ່ຂາດ)

**29** ພສສ. ບົດແລະຂໍ້ໃດເປັນຄຳທຳນວາຍວ່າ ພະເຢຊູເປັນຫີນທີ່ຊ່າງປະຖິ້ມ? ________

**30** ຜົນສຸດທ້າຍ ຄົນທີ່ປະຖິ້ມພະເຢຊູຈະເປັນຢ່າງໃດ? ____________________

## ຄຳອຸປະມາເລື່ອງພິທີອະພິເສກ

**31** ໃຫ້ອ່ານ ມັດທາຍ 22:1-14 ຄຳອຸປະມານີ້ເປັນຕົວຢ່າງເລື່ອງລາຊະອານາຈັກໃດ?

____________________________________________

| |
|---|
| ໃຫ້ຂີດເສັ້ນແດງກ້ອງຄຳ "ລາຊະອານາຈັກສະຫວັນ" ໃນ ມັດທາຍ 22:2<br>ແລະອີກກ້ອງຄຳ "ກະສັດ" ໃນຂໍ້ 2, 11, ແລະ 13. |

**32** ໃນຄຳອຸປະມາເລື່ອງພິທີອະພິເສກນີ້
ກ. ຜູ້ທີ່ຮັບເຊີນແຕ່ທີວທີນັ້ນ ຕອບຢ່າງໃດ? ____________________
ຂ. ພວກນັ້ນປຽບທຽບກັບຊາດໃດ? ____________________

**33** ໃນທີ່ສຸດ ພວກເຂົາເປັນຢ່າງໃດ? (ຂໍ້ 7) ____________________

**34** ພວກຄົນໃຊ້ອອກໄປຫາຄົນຢູ່ໃສ? (ຂໍ້ 10) ____________________

**35** ໃຫ້ກັບໄປປຽບເລື່ອງນີ້ ກັບເລື່ອງສວນອະງຸ່ນແລະຄົນເຊົ່າ.

ກ. ໃນ ມັດທາຍ 21:41 ເຈົ້າຂອງສວນຕັດສິນໃຈແລ້ວວ່າຈະໃຫ້ຄົນອື່ນເຊົ່າສວນຈຶ່ງຈະນຳຫຍັງມາ? ____________________________________________

ຂ. ໃນ ມັດທາຍ 21:43 ພະເຈົ້າຈະຍົກແຜ່ນດິນເອົາໄປໃຫ້ຊົນຊາດ ໜຶ່ງທີ່ຈະໃຫ້ຫຍັງ?_____

**36** ໃນ _ ກິດຈະການ 13:45-46 ເມື່ອພວກຄົນຢິວບໍ່ຍອມຟັງຄຳປະກາດຂອງ ໂປໂລ ກັບ ບາລະນາບາ ເຂົາປິ່ນໜ້າໄປຫາໃຜ? ____________________________________

**37** ກ. ແຕ່ກ່ອນ ມີແຕ່ພວກຊາດໃດເປັນຕົ້ນທີ່ຮັບພະທຳຂອງພະເຈົ້າ? _______________

ຂ. ເຂົາບໍ່ຢາກຮັບ ດັ່ງນັ້ນຜູ້ອື່ນທີ່ຍອມຮັບຄືພວກໃດ? _________________________

**38** ກ. ຄຳອຸປະມາເລື່ອງສວນອະງຸ່ນແລະຜູ້ເຊົ່າອ້າງເຖິງພວກຜູ້ນຳໃນຊາດໃດ? __________

ຂ. ຄຳອຸປະມາເລື່ອງພິທີອະພິເສກອ້າງເຖິງການເປີດໂອກາດໃຫ້ຊາດໃດ? ___________

**39** ກ. ຄຳອຸປະມາໃດກ່ຽວເລື່ອງພາລະຂອງຜູ້ນຳສາດສະໜາເປັນຕົ້ນ? _______________

ຂ. ຄຳອຸປະມາໃດສະແດງວ່າຂ່າວປະເສີດຂອງພະເຈົ້າເປີດໃຫ້ທຸກຄົນເຂົ້າມາໄດ້?_______

**40** ໃນ ມັດທາຍ 22:11-13 ເຫັນວ່າມີແຂກທີ່ມາງານຜູ້ໜຶ່ງທີ່ຂາດບໍ່ມີຫຍັງ? ___________

**41** ໃຫ້ທ່ານເປີດອ່ານ ພະນິມິດ 19:8ຜ້າປ່ານເນື້ອດີຂອງເຈົ້າສາວຄື ການປະຕິບັດອັນຊອບທຳຂອງໃຜ? ______________________________________________

**42** ກ. ເຄື່ອງນຸ່ງສຳລັບງານນັ້ນ ປຽບທຽບກັບການປະຕິບັດຢ່າງໃດ? _________________

ຂ. ຄືປຽບກັບຜົນໃນຊີວິດຂອງໄພ່ພົນໃດ? _______________________________

**43** ມີບາງຄົນທີ່ຮັບການເຊີນໄປງານ ແຕ່ເຂົາບໍ່ໄດ້ນຸ່ງເຄື່ອງທີ່ເໝາະສົມກັບງານ. ມີບາງຄົນທີ່ຮູ້ເລື່ອງພະທຳຂອງພະເຈົ້າ ແຕ່ເຂົາບໍ່ປະຕິບັດຕາມ. ໃນ ມທ 22:14 ມີບາງຄົນທີ່ຮັບເຊີນແຕ່ມີ ____________________ ຄົນທີ່ຊົງເລືອກໄວ້ (ຕື່ມຄວາມຂາດ)

**44** ເຄື່ອງສຳລັບງານ ປຽບທຽບກັບຫຍັງ? __________________________________

**45** ໃຫ້ອ່ານ ມັດທາຍ 21:33. ເຈົ້າຂອງສວນອະງຸ່ນຕຽມສວນອະງຸ່ນນັ້ນໄວ້ຢ່າງໃດ? (ເລືອກ)

ກ. ຕຽມໄວ້ຢ່າງສົມບູນເພື່ອຈະໄດ້ຜົນ. ຂ. ບໍ່ຕຽມເລີຍ.

ຄ. ບອກໃຫ້ຜູ້ອື່ນຕຽມໄວ້ເພື່ອຈະໄດ້ຜົນ.

**46** ໃນ ເອຊາຢາ 5:4 ພະເຈົ້າໄດ້ຕຽມສວນອະງຸ່ນ (ປຽບ ອິດສະລາເອນ) ໄວ້ຢ່າງໃດ?

______________________________________________________

**47** ໃນໂຢຮັນ 15:5 ມີເງື່ອນໄຂຢ່າງໃດຈຶ່ງຈະເກີດມີຜົນໃນຊີວິດຄຣິດສະຕຽນ?

______________________________________________________

**48** ຫຼັກຄຳສອນສຳຄັນໃນ ຄຳອຸປະມາເລື່ອງພິທີອະພິເສກຄືຫຍັງ? (ເລືອກ)

ກ. ພະເຈົ້າຊົງເພື່ອແຜ່ໃນການຫາລ້ຽງຊີວິດເຮົາ.

ຂ. ກະສັດນັ້ນບໍ່ຊອບທຳໃນການລົງໂທດໃຫ້ແຂກທີ່ນຸ່ງເຄື່ອງບໍ່ເໝາະສົມກັບງານ.

ຄ. ພວກຄົນທຳອິດທີ່ຮັບການເຊີນ ເຮັດວຽກດຸ

ງ. ພວກຄົນຢິວບໍ່ຢາກມາ ດັ່ງນັ້ນພະເຈົ້າເປີດໃຫ້ຄົນຕ່າງຊາດມາໄດ້.

ໃຫ້ທ່ານເປີດເບິ່ງຕາຕະລາງໃນບົດ 4 (ໜ້າ 51). ຈົດຄຳຕອບ 48
ຂ້າງ "ອຸປະມາເລື່ອງສວນອະງຸ່ນແລະຄົນເຊົ່າ" ລຸ່ມ "ຫຼັກຄຳສອນ"

**ຄຳຕອບ:**

**1** *ຄ ຖືກ*

**2** *ລາຊະແຜ່ນດິນຂອງພະເຈາ (ລາຊະອານາຈັກສະຫວັນ) ທັງ ກ. ຂ. ແລະ ຄ.*

**3** *ຄ. ຖືກ*

**4** *ກ. ລູກຊາຍສອງຄົນ. ຂ. ສວນອະງຸ່ນແລະຄົນເຊົ່າ ແລະ ພິທີອະພິເສກ*

**5** *ກ. ລາຊະແຜ່ນດິນ ຂ. ການເຊື່ອຟັງມີຄຸນຄ່າຫຼາຍກວ່າຄຳສັນຍາ.*

**6** *ກ. ເລື່ອງລູກຊາຍສອງຄົນ ຂ. ເລື່ອງສວນອະງຸ່ນແລະຄົນເຊົ່າ*
*ຄ. ເລື່ອງພິທີອະພິເສກ*

**7** *ຊາດຢິວ*

**8** *ຂ ງ ຈ ແລະ ຍ.*

**9** *ກ*

**10** *ຂ*

**11** *ພະເຢຊູ*

**12** *ກ. ປະໂລຫິດ ແລະຟາລີຊາຍ ຂ. ຮູ້ ຄ. ພະຍາຍາມຈະຈັບພະອົງ*
*ງ. ຄົນເຊົ່າສວນທີ່ຂ້າຂ້ອຍໃຊ້ກັບລູກຊາຍ*

**13** *1. ຂ ຖືກ 2. ຄ ຖືກ 3. ກ ຖືກ 4. ງ ຖືກ*

**14** *ກ. ໝາກ ຂ. ຈາກຄົນເຊົ່າສວນ*

**15** *ກ. ຫ່ຽວແຫ້ງລົງ ຂ. ຂ້າເຂົາເສຍ ຄ. ຊາດຢິວ ງ. ຟາລີຊາຍແລະປະໂລຫິດ*
*ຈ. ຄ້າຍຄືກັນ*

**16** *ລາຊະແຜ່ນດິນຂອງພະເຈາ.*

**17** *ຂ ຖືກກວ່າ*

**18** *ພສສ 118:22*

**19** *ກ. ຫີນ ຂ. ຊ່າງ ຄ. ເສົາເອກ*

**20** *ພະເຢຊູ*

**21** *ກ. ພວກຊ່າງ ຂ. ພວກຟາລີຊາຍແລະປະໂລຫິດຕົນໃຫຍ່*

**ຄຳຕອບ (ຕໍ່):**

**22** *ເສົາເອກ*

**23** *ກ. ພສສ 118:22 ຂ. ກຈກ 4:11 ຄ. ເປໂຕ*

**24** *ກ. ພະເຢຊູ ຂ. ເສົາເອກ*

**25** *ກ. ຕ້ອງແຕກຫັກໄປ. ຂ. ແຫຼກ ມຸ່ນໄປ*

**26** *ກ. ຂໍ້ 7 ຂ. ສະດຸດລົມ*

**27** *ຜູ້ບໍ່ຍອມຮັບ*

**28** *ກ. ເປໂຕ ຂ. ກິດຈະການ ບົດ 4... 1 ເປໂຕ ບົດ 2*

**29** *ພສສ 118:22*

**30** *ເສຍ (ຄຳຄ້າຍຄືກັນກໍໄດ້)*

**31** *ລາຊະອານາຈັກສະຫວັນ*

**32** *ກ. ບໍ່ຢາກມາ ຂ. ຊາດຢິວ*

**33** *ຖືກຂ້າ (ປະຫານຊີວິດ)*

**34** *ຕາມຖະໜົນຫົນທາງ.*

**35** *ກ. ຜິນ ຂ. ຜິນ*

**36** *ພວກຕ່າງຊາດ*

**37** *ກ. ຢິວ ຂ. ພວກຕ່າງຊາດ*

**38** *ກ. ຊາດຢິວ ຂ. ພວກຕ່າງຊາດ*

**39** *ກ. ສວນອະງຸ່ນແລະຄົນເຊົ່າ ຂ. ພິທີອະພິເສກ*

**40** *ບໍ່ນຸ່ງເຄື່ອງສຳລັບງານ*

**41** *ໄພ່ພົນຂອງພະເຈົ້າ*

**42** *ກ. ອັນຊອບທຳ ຂ. ຂອງພະເຈົ້າ*

**43** *ໜ້ອຍ*

**44** *ການປະຕິບັດຢ່າງຊອບທຳຂອງໄພ່ພົນພະເຈົ້າ. (ຄຳຄ້າຍຄືກັນກໍໄດ້)*

**45** *ກ ຖືກ*

**46** *ຕຽມໄວ້ຢ່າງສົມບູນ (ຄຳຄ້າຍຄືກັນກໍໄດ້)*

**47** *ຈົ່ງເຂົ້າສະນິດຢູ່ໃນພະອົງ*

**48** *ງ ຖືກ*